**ສະຫລອງພຣະເຢຊູເຈົ້າສະເດັດຂຶ້ນສະຫວັນ**

**ວັນທີ 21 ພຶດສະພາ 2023**



**ພຣະວໍລະສານໂດຍນັກບຸນມັດເທວ 28, 16-20**

ໃນເວລານັ້ນ, ພວກອັກຄະສາວົກທັງສິບເອັດອົງພາກັນຂຶ້ນເທິງພູໜ່ວຍໜຶ່ງຢູ່ແຂວງກາລີເລ, ຕາມພຣະອົງໄດ້ສັ່ງບອກ. ເມື່ອພົບເຫັນພຣະອົງແລ້ວ, ພວກເຂົາກໍພາກັນຂາບໄຫວ້ນະມັດສະການພຣະອົງ; ແຕ່ລາງຄົນຍັງມີຄວາມສົງໄສຢູ່.

ພຣະເຢຊູເຈົ້າຊົງຫຍັບເຂົ້າໄປຫາພວກເຂົາແລະກ່າວວ່າ: "ເຮົາໄດ້ຮັບສິດອໍານາດທຸກປະການໃນສະຫວັນແລະໃນແຜ່ນດິນ, ດັ່ງນັ້ນ, ພວກເຈົ້າຈົ່ງພາກັນໄປທົ່ວໂລກເພື່ອທໍາໃຫ້ທຸກຊາດທຸກພາສາໄດ້ກັບເປັນລູກສິດຂອງເຮົາ, ຈົ່ງລ້າງບາບໃຫ້ພວກເຂົາ: ເດຊະພຣະນາມພຣະບິດາ ແລະພຣະບຸດ ແລະພຣະຈິດ. ແລະສອນໃຫ້ເຂົາຖືຕາມພຣະບັນຍັດທັງມວນຂອງເຮົາ, ສ່ວນເຮົາ, ເຮົາກໍຢູ່ນໍາພວກເຈົ້າທຸກໆວັນຈົນເຖິງວັນສິ້ນພິພົບ."

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້, ພວກເຮົາສະຫລອງພຣະເຢຊູເຈົ້າສະເດັດຂຶ້ນສະຫວັນ. ສີ່ສິບວັນຫລັງຈາກພຣະອົງໄດ້ກັບເປັນຄືນມາຈາກຄວາມຕາຍ. ການທີ່ພຣະເຢຊູເຈົ້າກັບຄືນເມືອຫາພຣະບິດານັ້ນບໍ່ແມ່ນພຣະອົງປະໃຫ້ພວກລູກສິດຕ້ອງເປັນກຳພ້າຢູ່ໂດດດ່ຽວໃນໂລກນີ້, ແຕ່ພຣະອົງໄປເພື່ອຕຽມບ່ອນໄວ້ສຳລັບພວກລູກສິດແລະສຳລັບພວກເຮົາແຕ່ລະຄົນໃນເຮືອນຂອງພຣະບິດາ. ດ້ວຍເຫດນີ້, ກ່ອນທີ່ພຣະອົງຈະຈາກໄປ ພຣະອົງໄດ້ປະຈັກມາຫາພວກລູກສິດຫລາຍຄັ້ງເພື່ອຢັ້ງຢືນໃຫ້ພວກເຂົາຮູ້ວ່າພຣະອົງໄດ້ຊະນະຄວາມຕາຍແລ້ວ. ແລະສິ່ງທີ່ພວກລູກສິດຕ້ອງກະທຳຄືໃຫ້ເປັນພິຍານເຖິງການກັບເປັນຄືນມາຂອງພຣະອົງໃຫ້ກັບທຸກຄົນ ໂດຍເລີ່ມຕົ້ນຈາກນະຄອນເຢລູຊາແລມຈົນເຖິງສຸດແຜ່ນດິນໂລກ. ນີ້ແມ່ນພາລະກິດແຫ່ງການປະກາດຂ່າວດີຂອງພຣະເຢຊູເຈົ້າທີ່ພຣະອົງໄດ້ມອບໃຫ້ພວກລູກສິດຢູ່ໃນແຜ່ນດິນນີ້. ແລະພາລະກິດນີ້ຕ້ອງສືບຕໍ່ໄປຈົນເຖິງວັນພຣະອົງຈະສະເດັດກັບມາອີກຄັ້ງ.

ແຕ່ພຣະເຢຊູເຈົ້າຮູ້ດີວ່າ, ພວກລູກສິດບໍ່ສາມາດປະຕິບັດພາລະກິດນີ້ໄດ້ດ້ວຍຕົວເອງ. ດັ່ງນັ້ນ, ພຣະອົງຈຶ່ງສັນຍາວ່າຈະສົ່ງພຣະຈິດຂອງພຣະອົງລົງມາຢູ່ນຳພວກເຂົາ ແລະຈະທຳໃຫ້ພວກເຂົາເຂົ້າໃຈສິ່ງທີ່ພວກເຂົາປະກາດເປັນພິຍານ. ອົງພຣະຈິດເຈົ້ານີ້ແມ່ນການປະທັບອີກຮູບແບບໜຶ່ງຂອງພຣະເຢຊູເຈົ້າໃນພຣະກຣິສຕະຈັກຂອງພຣະອົງ. ແຕ່ນີ້ຕໍ່ໄປ, ຫາກຜູ້ໃດເຊື່ອໃນພຣະອົງກໍຈະໄດ້ຮັບສິນລ້າງບາບແລະເກີດໃໝ່ໃນນ້ຳແລະພຣະຈິດເຈົ້າ. ເດຊະພຣະນາມ, ພຣະບິດາແລະພຣະບຸດແລະພຣະຈິດ.

ແລະພວກເຮົາຜູ້ເປັນສິດຂອງພຣະເຢຊູເຈົ້າຜ່ານທາງສິນລ້າງບາບ, ພວກເຮົາກໍມີໜ້າທີ່ເປັນພິຍານເຖິງພຣະອົງໃນຊີວິດຂອງພວກເຮົາ. ເພື່ອວ່າຜ່ານທາງພວກເຮົາ ຄົນທີ່ຍັງບໍ່ຮູ້ຈັກພຣະເຢຊູເຈົ້າຈະໄດ້ຮູ້ວ່າພວກເຮົາແມ່ນສິດຂອງພຣະອົງແລະເຊື່ອໃນພຣະອົງ.

**ພາວະນາ**

ໂອພຣະເຢຊູເຈົ້າ, ໃນວັນທີ່ພຣະອົງສະເດັດຂຶ້ນສະຫວັນກັບຄືນເມືອຫາພຣະບິດານີ້, ໂຜດຊ່ວຍລູກໃຫ້ມີຄວາມປາດຖະໜາແຕ່ເມືອງສະຫວັນ. ເພື່ອວ່າວັນໜຶ່ງເມື່ອລູກຈາກໂລກນີ້ໄປແລ້ວ, ລູກຈະໄດ້ໄປຢູ່ເມືອງສະຫວັນຮ່ວມສຸກກັບພຣະອົງນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ